ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ສູນອິນເຕີເນັດ ແຫ່ງຊາດ

ຄະນະຮັບຜິດຊອບຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການ

ເລກທີ...575...../ສອຊ

ນະຄອນຫຼວງວຽງຈັນ, ວັນທີ 05 ມິຖຸນາ 2026

# ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍຕາງໜ້າ ສູນອິນເຕີເນັດ ແຫ່ງຊາດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດ ທີ່ເໝາະສົມ ທີ່ດຳເນີນກິດຈະການດ້ານອຸປະກອນໄອທີ, ອຸປະກອນລະບົບເຄືອຂ່າຍ, ອຸປະກອນຄວາມປອດໄພ, ອຸປະກອນແມ່ຂ່າຍ ເພື່ອເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ ການປັບປຸງ ແລະ ຂະຫຍາຍລະບົບລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດ .ລາວ ແລະ .LA, ກຳນົດມອບຮັບສິນຄ້າ 60 ວັນ ພາຍຫຼັງທີ່ເຈົ້າຂອງໂຄງການອອກເອກະສານສັ່ງຊື້;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນຄັ້ງນີ້ອະນຸຍາດໃຫ້ບັນດາຜູ້ປະມູນທີ່ມີຄຸນນະວຸດເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງກັບການສະໜອງອຸປະກອນໄອທີ, ອຸປະກອນລະບົບເຄືອຂ່າຍ, ອຸປະກອນຄວາມປອດໄພ, ອຸປະກອນແມ່ຂ່າຍ;
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ ພະແນກສັງລວມ, ຊັ້ນ 1 ສູນອິນເຕີເນັດ ແຫ່ງຊາດ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ບ້ານ ສາຍລົມ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທຕິດຕໍ່: 020 54663966, 020 59994536 ເລີ່ມຂາຍຊອງແຕ່ວັນທີ 8 ມິຖຸນາ 2026 ເຖິງວັນທີ 13 ກໍລະກົດ 2026 (ໃນໂມງລັດຖະການ), ໃນລາຄາ 5,000,000 ກີບຕໍ່ຊອງ, ສິ່ງມອບເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 13 ກໍລະກົດ 2026 ທີ່ ສູນອິນເຕີເນັດ ແຫ່ງຊາດ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ບ້ານສາຍລົມ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບພິຈາລະນາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງ ວັນທີ 13 ກໍລະກົດ 2026 ໂດຍຊ້ອງໜ້າ ຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ການປະມູນແມ່ນນຳໃຊ້ຂັ້ນຕອນດຽວ ຊອງປະມູນປະກອບມີ: 1. ຊອງເຕັກນິກ, 2. ຊອງລາຄາ (ຕົ້ນສະບັບ 01 ຊຸດ ແລະ ກອບປີ້ 01 ຊຸດ); ເອກະສານປະມູນໃຫ້ແຍກເປັນສອງຊອງ, ຊອງການອອກແບບລະບົບເຕັກນິກ ແລະ ຊອງຂອງໃບສະເໜີລາຄາ, ຊອງເຕັກນິກຈະໄດ້ເປີດ ເພື່ອກວດກາກ່ອນ ແລະ ຜູ້ທີ່ຜ່ານ ຈຶ່ງຈະເປີດຊອງສະເໜີລາຄາ (ຜູ້ທີ່ຜ່ານການກວດກາຊອງເຕັກນິກແລ້ວ) ໃຫ້ເປີດຊອງລາຄາ.
7. ຕ້ອງປະກອບເອກະສານປະມູນຕາມແບບຟອມສະເໜີລາຄາທີ່ເຈົ້າຂອງໂຄງການກຳນົດໃຫ້ຄົບຖ້ວນ (ມູນຄ່າສະເໜີແມ່ນລວມຄ່າພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ);
8. ທຸກຊອງປະມູນຕ້ອງປະກອບມີໜັງສືຄ້ຳປະກັນການປະມູນ ດ້ວຍເງິນສົດ, ໜັງສືຄ້ຳປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງມູນຄ່າທີ່ສະເໜີ;

**ຮອງຫົວໜ້າສູນ**

(ຫົວໜ້າຄະນະຮັບຜິດຊອບຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການ)

ໄຊສົມຫວັງ ສຸວັນນະວົງ